**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນໍ້າປະປາ

ເລກທີ 737 /ກນປ
ນະຄອນຫລວງວຽງຈັນ, ວັນທີ 19 ພະຈິກ 2024

# ໜັງສືແຈ້ງເຊີນປະມູນ

**ເຊີນເຂົ້າຮ່ວມການປະມູນວັນທີ : 19 ພະຈິກ 2024.**

**ຊື່ຂອງໂຄງການ : ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ.**

**ທຶນກູ້ຢືມ: ທະນາຄານໂລກອະນຸມັດເລກທີ: Credit Number 6375-LA.**

**ຊື່ຂອງສັນຍາ: ການກໍ່ສ້າງລະບົບນໍ້າປະປາຊຸມຊົນຢູ່ເມືອງ ຫົວເມືອງ, ເມືອງຊ່ອນ, ເມືອງກວັນ ແລະ ເມືອງຊໍາໃຕ້ ແຂວງຫົວພັນ.**

**ລະຫັດສັນຍາເລກທີ: C1/W/32.**

**ກອງປະຊຸມກ່ອນການເປີດຊອງ: 4 ທັນວາ 2024, ເວລາ 14:00 ໂມງ.**

**ວັນປິດຮັບຊອງປະມູນ: 25 ທັນວາ 2024, ເວລາ 14:00 ໂມງ.**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບເງິນກູ້ຢືມດອກເບ້ຍຕໍ່າ ຈາກທະນາຄານໂລກ ເພື່ອໃຊ້ຈ່າຍສໍາລັບ ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ແລະ ມີຈຸດປະສົງນໍາໃຊ້ທຶນເຂົ້າໃນການກໍ່ສ້າງລະບົບນໍ້າປະປາຊຸມຊົນ ເພື່ອໃຫ້ປະຊາຊົນເຂົ້າເຖິງການບໍລິການນໍ້າປະປາ ທີ່ສະອາດ ແລະ ປອດໄພ.
2. ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມນໍ້າປະປາ, ຂໍເຊີນບັນດາບໍລິສັດທີ່ມີເງື່ອນໄຂເຂົ້າຮ່ວມ ການປະມູນເປີດກວ້າງພາຍໃນ ສໍາລັບໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ລາຍລະອຽດຂອງສັນຍາໄດ້ລະບຸໄວ້ດັ່ງລຸ່ມນີ້:

| **ລະຫັດ ສັນຍາ** | **ຊື່ສັນຍາ** | **ສະຖານທີ່ກໍ່ສ້າງ** | **ວັນ ແລະ ເວລາ ໃນການຈັດຕັ້ງປະຕິບັດໃຫ້ສໍາເລັດ** |
|---|---|---|---|
| C1/W/32 | ການກໍ່ສ້າງລະບົບນໍ້າປະປາຊຸມຊົນຢູ່ ເມືອງຫົວເມືອງ, ເມືອງຊ່ອນ, ເມືອງກວັນ ແລະ ເມືອງຊໍາໃຕ້ ແຂວງຫົວພັນ | ເມືອງຫົວເມືອງ, ເມືອງຊ່ອນ, ເມືອງກວັນ ແລະ ເມືອງຊໍາໃຕ້ ແຂວງຫົວພັນ | 10 ເດືອນ ຫຼັງຈາກເຊັນສັນຍາ |

ເງື່ອນໄຂ ແລະ ຄຸນສົມບັດຂອງບໍລິສັດທີ່ສາມາດເຂົ້າຮ່ວມການປະມູນ ຊຶ່ງມີເງື່ອນໄຂພື້ນຖານ ດັ່ງລຸ່ມນີ້:

- ຄວາມອາດສາມາດດ້ານການເງິນ ຢ່າງໜ້ອຍ 650,000 ໂດລາສະຫະລັດ (ຊຶ່ງຜູ້ປະມູນຈະສາມາດໄດ້ຮັບຊະນະການປະມູນສູງສຸດບໍ່ເກີນ 2 ສັນຍາ ຂອງນໍ້າປະປາຊຸມຊົນ, ນອກຈາກຈະມີສັນຍາທີ 1 ຫຼື ສັນຍາທີ 2 ທີ່ໄດ້ຮັບຮອງ ຖືກປະຕິບັດສໍາເລັດແລ້ວເກີນ 80% ກໍ່ສາມາດໄດ້ສັນຍາທີ 3).

- ລາຍຮັບສະເລ່ຍປະຈຳປີ ໃນໄລຍະ 05 ປີຜ່ານມາ ແບບຕໍ່ເນື່ອງກັນ 5 ປີ ໃນລະຫວ່າງປີ (2015, 2016, 2017, 2018, 2019, 2020, 2021, 2022, 2023) ຢ່າງໜ້ອຍ 2,600,000 ໂດລາສະຫະລັດ.
- ປະສົບການສະເພາະວຽກກໍ່ສ້າງທົ່ວໄປຜ່ານມາ ພາຍໃນ 7 ປີ ຢ່າງໜ້ອຍ ຈຳນວນ 2 ສັນຍາ.
- ປະສົບການສະເພາະວຽກກໍ່ສ້າງ ແລະ ຄຸ້ມຄອງສັນຍາທີ່ຄ້າຍຄືກັນ (i) ກໍລະນີມີ 1 ສັນຍາ, ສັນຍາຕ້ອງມີມູນຄ່າຢ່າງໜ້ອຍ 1,300,000 ໂດລາສະຫະລັດ (ii) ກໍລະນີມີ 2 ສັນຍາ ຫລື ຫລາຍກວ່າ, ແຕ່ລະສັນຍາຕ້ອງມີມູນຄ່າຢ່າງໜ້ອຍ 910,000 ໂດລາສະຫະລັດ. ຕ້ອງມີປະສົບການໃນການກໍ່ສ້າງ ວຽກກໍ່ສ້າງໂຮງງານຜະລິດນ້ຳປະປາ, ລະບົບກັ່ນຕອງດ້ວຍແຮ່ ແລະ ຊາຍ (ແບບຕອງຊ້າ ຫຼື ແບບຕອງໄວ) ຫຼື ລະບົບການຈ່າຍນ້ຳສະອາດ ຫຼື ລະບົບກອງນ້ຳປະເພດອື່ນໆ ຫຼື ສຳລັບຜະລິດໂຮງງານນ້ຳປະປາ ຫຼື ນ້ຳລິນ ຂະໜາດກຳລັງການຜະລິດຕ່ຳສຸດ 50 $ມ^3$/ວັນ ຫຼື ຕ້ອງມີປະສົບການໃນການກໍ່ສ້າງຫ້ອງານ (Intake) ປະເພດອື່ນໆ ຫຼື ການວາງທໍ່ ແລະ ຕິດຕັ້ງອຸປະກອນທໍ່ກ່ຽວກັບລະບົບທໍ່ສົ່ງນ້ຳ ແລະ ອື່ນໆ.

3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ຕາມທີ່ໄດ້ລະບຸໄວ້ໃນຄູ່ມື ແນະນຳຂອງທະນາຄານໂລກວ່າດ້ວຍ: ການຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະ ການບໍລິການ ທີ່ບໍ່ແມ່ນດ້ານທີ່ປຶກສາ, ພາຍໃຕ້ການກູ້ຢືມເງິນ (IDA) ຈາກທະນາຄານ (“ຄູ່ມືການຈັດຊື້-ຈັດຈ້າງ”) ແລະ ເປີດໃຫ້ຜູ້ປະມູນທຸກໆຄົນຕາມທີ່ໄດ້ລະບຸໄວ້ໃນປຶ້ມຄູ່ມືຈັດຊື້-ຈັດຈ້າງ. ພ້ອມກັນນັ້ນ, ໃຫ້ເບິ່ງ ຂໍ້ແນະນຳສຳລັບຜູ້ປະມູນຂໍ້ ITB 4.3 ທີ່ກຳນົດໄວ້ໃນນະໂຍບາຍຂອງທະນາຄານໂລກວ່າດ້ວຍການຂັດແຍ່ງທາງດ້ານຜົນປະໂຫຍດ.
4. ບັນດາບໍລິສັດທີ່ມີຄວາມສົນໃຈ ສາມາດພົວພັນຮັບຂໍ້ມູນຈາກ ໜ່ວຍງານຄຸ້ມຄອງໂຄງການ ຂອງໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ທີ່ຂຶ້ນກັບ ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມທີ່ຢູ່ຂ້າງລຸ່ມນີ້ ໃນໂມງລັດຖະການ (ເວລາ 08:00 ຫາ 12:00 ໂມງ ແລະ 13:00 ຫາ 16:00 ໂມງ).
5. ບໍລິສັດທີ່ມີຄວາມສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ໂຄງການຂະຫຍາຍນ້ຳປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ (ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ) ຊັ້ນ 4, ຖະໜົນດົງປ່າລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ລາຄາຊອງປະມູນ 3,000,000 ກີບ (ສາມລ້ານກີບ); ວິທີຊຳລະເປັນຮູບແບບເງິນສົດ, ເງິນດັ່ງກ່າວຈະບໍ່ຖືກສົ່ງຄືນ ທຸກກໍລະນີ.
6. ຊອງປະມູນ ຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ທີ່ ຫ້ອງປະຊຸມຊັ້ນ 4, ຖະໜົນດົງປ່າລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ ກ່ອນເວລາ 14:00 ໂມງ ວັນທີ 25 ທັນວາ 2024, ການສົ່ງດ້ວຍລະບົບເອເລັກໂຕຼນິກ ຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມຢູ່ສະຖານທີ່ທີ່ໄດ້ກຳນົດໄວ້ຂ້າງລຸ່ມນີ້.
7. ທຸກໆເອກະສານຈະຕ້ອງປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ (Bid Securing Declaration).
8. ສະຖານທີ່ຍື່ນຊອງປະມູນ:

ຫ້ອງປະຊຸມໂຄງການ ຊັ້ນ 4, ກະຊວງໂຍທາທິການ ແລະ ຂົນສົ່ງ,
ຖະໜົນດົງປ່າລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ : +856 21 452167; ອີແມວ: swsshp.procurement@gmail.com;
ທ່ານ ຈັນເທພາ ຂັດຕິຍະວົງ, ຫົວໜ້າໂຄງການ.

**ຮັກສາການຫົວໜ້າກົມ**

ກະຊວງໂຍທາທິການ ແລະ ຂົນສົ່ງ ກົມນ້ຳປະປາ

ພູວັນ ແສນບຸດຕະລາດ